# ຢາວັກຊິນກັນໂຣກເປັ້ຍຫລ່ອຍ

## ສິ່ງ ທີ່ ທ່ານ ຕ້ອງ ຮູ້

## 1 ໂຣກເປັ້ຍຫລ່ອຍ Polio ແມ່ນຫຍັງ ?

**ໂຣກເປັ້ຍຫລ່ອຍເກີດຈາກເຊື້ອວາຍຣາສ໌.** ມັນເຂົ້າໄປທາຣ່າງກາຍຂອງ ເດັກ ( ຫຼື ຜູ້ໃຫ່ຍ) ໂດຍຜ່ານທາງປາກ. ບາງຄັ້ງມັນກໍຈະບໍ່ພາໃຫ້ເກີດ ເຈັບປ່ວຍທີ່ອັນຕຣາຍໃດໆໝັກໝາຫຍັງ. ແຕ່ບາງຄັ້ງມັນອາດທຳໃຫ້ ເກີດເປັນເປັ້ຍຫລ່ອຍ (ບໍ່ສາມາດທີ່ໜີງຕີງແຂນຫຼືຂາ). ໂຣກນີ້ສາມາດ ທຳໃຫ້ຜູ້ປ່ວຍຕາຍ ສ່ວນຫຼາຍຍ້ອນວ່າມັນເຮັດໃຫ້ລະບົບກ້າມເນື້ອທີ່ເປັນປະໂຫຍດໃນສ່ວນຫາຍໃຈໝົດແຮງຫລ່ອຍລົງ.

ໂຣກເປັ້ຍຫລ່ອຍເຄີຍເປັນໂຣກຊະນິດນຶ່ງທີ່ແຜ່ຊ້ຳເຮື້ອຢູ່ໃນສຫາຣັຖ. ມັນທຳໃຫ້ຄົນເປັນເປັ້ຍຫລ່ອຍແລະເສັຍຊີວິດເປັນຈຳນວນຫຼາຍພັນຄົນຕໍ່ ປີ ກ່ອນທີ່ຄົນເຮົາຈະຜລິດຢາວັກຊິນມາຊ່ວຍປ້ອງກັນໂຣກນີ້.

## 2 ເປັນຫຍັງຈຶ່ງໃຊ້ຢາວັກຊິນປ້ອງກັນໂຣກນີ້

**ຢາວັກຊິນຕ້ານໂຣກເປັ້ຍຫລ່ອຍ** Inactivated Polio Vaccine (IPV) **ສາມາດປ້ອງກັນຄົນ ເຮົາບໍ່ໃຫ້ຕິດໂຣກນີ້ໄດ້.**

**ປະຫວັດ:** ໃນປີ 1916 ທ່າພຍາດເປັ້ຍຫລ່ອຍຣະບາດຢູ່ ສຫາຣັຖ ອາເມຣິກາ ໄດ້ດັບຊີວິດຄົນ 6,000 ແລະຄົນປ່ອຍໃຫ້ເປັນເປັ້ຍຫຼາຍກວ່າ 27,000 ຄົນ. ໃນຕອນຕົ້ນປີ 1950 ມີຄົນຫຼາຍກວ່າ 20,000 ລາຍ ເປັນເປັ້ຍຫລ່**ອຍນີ້. ຢາວັກຊິນກັນໂຣກເປັ້ຍຫລ່ອຍນີ້ເລີ້ມໃຊ້ໃນປີ 1955.** ໃນປີ 1960 ເຫັນວ່າຈຳນວນຜູ້ທີ່ເປັນໂຣກເປັ້ຍຫລ່ອຍນີ້ລຸດ ລົງຣະຫວ່າງ 3,000 ແລະໃນປີ 1979 ມີພຽງ 10 ລາເທົ່ານັ້ນ. ຜົນສຳເຣັດຂອງການໃຊ້ຢາວັກຊິນກັນໂຣກເປັ້ຍຫລ່ອຍ ໃນສຫາຣັຖ ໄດ້ກາຍເປັນຮາກເຫງົ້າຂອງຄວາມຕັ້ງໃຈພຍາຍາມທີ່ຈະກຳຈັດພຍາດນີ້ໃຫ້ຫມົດໄປໃນໂລກ.

**ໃນປະຈຸບັນນີ້:** ໃນສຫາຣັຖນີ້ 20 ກວ່າປີຜ່ານມາແລ້ວ ບໍ່ເຫັນມີ ປະກົດການເຣື່ອງໂຣກເປັ້ຍຫລ່ອຍລະບາດ. ແຕ່ວ່າໂຣກນີ້ກໍຍັງຄົງມີຢູ່ ແລະລະບາດສເມີມາຢູ່ໃນບາງປະເທດ. ຄົນປ່ວຍທີ່ເປັນໂຣກນີ້ ພຽງຜູ້ດຽວຈາກທີ່ອື່ນກໍສາມາດລະບາດພຍາດນີ້ຄືນໄດ້ອີກ. ຖ້າເຮົາຫາກບໍ່ໃຊ້ຢາວັກຊິນປ້ອງກັນໄວ້. ຖ້າວ່າຄວາມພຍາຍາມທີ່ຈະ ກຳຈັດພຍາດນີ້ຈາກໂລກເຮົາຫາກໄດ້ຜົນສຳເຣັດ, ວັນນັ້ນພວກເຮົາ ຈະບໍ່ເປັນຫ່ວງທີ່ຈະໃຊ້ຢາວັກຊິນປ້ອງກັນອີກຕໍ່ໄປ. ກວ່າຈະເຖິງວັນນັ້ນ ພວກເຮົາກໍຍັງຕ້ອງໄດ້ສືບຕໍ່ໃຫ້ລູກຂອງເຮົາໃຊ້ຢາວັກຊິນປ້ອງກັນໄວ້.

## 3 ໃຜຄວນຈະໄດ້ສັກຢາວັກຊິນກັນໂຣກເປັ້ຍຫລ່ອຍນີ້)

ຢາວັກຊິນ ໄອພີວີ (IPV) ເປັນຢາສັກ, ອາດຈະສັກໃສ່ທີ່ແຂນຫຼືຂາ, ຂຶ້ນກັບອາຍຸ. ຢາວັກຊິນກັນໂຣກເປັ້ຍຫລ່ອຍນີ້ອາດຈະເອົາໃຫ້ພ້ອມກັນ ກັບຢາວັກຊິນກັນໂຣກຊະນິດອື່ນກໍໄດ້.

**ເດັກນ້ອຍ:**

ຄົນສ່ວຍໃຫ່ຍຄວນຈະໄດ້ຮັບຢາວັກຊິນ ກັນໂຣກເປັ້ຍຫລ່ອຍ ເມື່ອຕອນ ຍັງເປັນເດັກ. ເດັກນ້ອຍຄວນໄດ້ຮັບຢາວັກຊິນນີ້ໃຫ້ຄົບ 4 ຊຸດດັ່ງຕໍ່ ໄປນີ້:

✔ ຊຸດນຶ່ງ ຕອນອາຍຸໄດ້ 2 ເດືອນ ✔ ຊຸດນຶ່ງຕອນອາຍຸໄດ້ 6-18 ເດືອນ
✔ ຊຸດນຶ່ງ ຕອນອາຍຸໄດ້ 4 ເດືອນ ✔ ຊຸດນຶ່ງເສີມພລັງ ຕອນອາຍຸໄດ້ 4-6 ປີ

**ຜູ້ໃຫ່ຍ**

ຜູ້ໃຫ່ຍບໍ່ຈຳເປັນໃຊ້ຢາວັກຊິນປ້ອງກັນໂຣກເປັ້ຍຫລ່ອຍເພາະພວກເພິ່ນກໍໄດ້ຮັບມາແລ້ວໃນຄາວຍັງເປັນເດັກ. ແຕ່ຜູ້ໃຫ່ຍຈຳນວນນຶ່ງທີ່ຖືວ່າເຂົ້າຢູ່ໃນເຂດກັນດານ ເພາະມີບັນຫາທາງສຸຂະພາບ *ຄວນຈະ*ສັກຢາວັນ ນີ້ກັນໄວ້ຄື:

(1) ຜູ້ທີ່ເດີນທາງເຂົ້າໄປໃນເຂດບໍຣິເວນທີ່ໂຣກເປັ້ຍຫລ່ອຍລະບາດຢູ່ສເມີມາ
(2) ພນັກງານແພດປະຈຳໃນຫ້ອງທົດລອງກຸກກວ້ຳກັບເຊື້ອໂຣກເປັ້ຍ ຫລ່ອຍ ແລະ
(3) ພນັກງານແພດຜູ້ທີ່ປິ່ນປົວຄົນໃຂ້ທີ່ອາດກຳລັງເປັນ ໂຣກເປັ້ຍຫລ່ອຍຢູ່.

ຜູ້ໃຫ່ຍໃນສາມຈຳພວກທີ່ກ່າວມາຂ້າງເທິງນີ້ຜູ້ທີ່**ບໍ່ທັນໄດ້ສັກຢາວັກຊິນປ້ອງກັນໂຣກເປັ້ຍຫລ່ອຍປີຈັກເທື່ອຄ**ວນໄດ້ຮັບຢາວັກຊິນ ກັນໂຣກເປັ້ຍຫລ່ອຍ ໃຫ້ຄົບ 3 ຊຸດ:

✔ ຊຸດທຳອິດນັ້ນ ຈະໄດ້ເມື່ອໃດກໍໄດ້
✔ ຊຸດທີສອງນັ້ນ ໃຫ້ຮັບ 1-2 ເດືອນ ຫຼັງຈາກຮັບຂນານທຳອິດ
✔ ຊຸດທີສາມນັ້ນໃຫ້ຮັບ 6-12 ເດືອນ ຫຼັງຈາກຮັບຂນານທີສອງ

ຜູ້ໃຫ່ຍສາມຈຳພວກກ່າວຂ້າງເທິງນີ້ທີ່ໄດ້ຮັບຢາວັກຊິນກັນໂຣກ ເປັ້ຍຫລ່ອຍ **ປີມາແລ້ວພຽງເທື່ອ 1-2 ຊຸດ** ຄວນຮັບອີກຕື່ມ ໃຫ້ຄົບຕາມຈຳນວນທີ່ກຳນົດໄວ້ 1 ຫຼື 2 ຊຸດ. ບໍ່ຕ້ອງເປັນຫ່ວງ ວ່າຕັ້ງແຕ່ດຽວນີ້ກັບຄືນຫາຊຸດທຳອິດນັ້ ນເວລາຈະລ່ວງເລີຍມາດົນແລ້ວເທົ່າໃດກໍຕາມ.

ຜູ້ໃຫ່ຍສາມຈຳພວກກ່າວມາຂ້າງເທິງນີ້ຜູ້ທີ່ໄດ້ຮັບຢາວັກຊິນ **ເຖິງ 3 ຊຸດ ຫຼື ຫຼາຍກວ່າ.** (ຊະນິດ IVP ຫຼື ຊະນິດ OPV ຢອດເຂົ້າທາງປາກ) ອາດຕ້ອງໄດ້ຮັບອີກນຶ່ງຊຸດໃຫ່ຍສຸດທ້າຍຊະນິດສັກ (IPV).

ຈົ່ງສອບຖາມນຳທ່ານໝໍຂອງທ່ານເພື່ອລາຍລະອຽດເພີ່ມຕື່ມ.

**ຢາວັກຊີກ ໂອພີໂອ ຊະນິດຢອດທາງປາກ : ບໍ່ໄດ້ແນະນຳໃຫ້ໃຊ້ຕໍ່ໄປອີກແລ້ວ**

ຢາວັກຊິນກັນໂຣກເປັ້ຍຫລ່ອຍຊະນິດຢອດເຂົ້າທາງປາກ: ເພິ່ນບໍ່ຫງວນໃຫ້ໃຊ້ສັກອີກແລ້ວ, ຢາວັກຊິນກັນໂຣກ ເປັ້ຍຫລ່ອຍມີ ສອງຊະນິດດ້ວຍກັນຄື: ຢາໄອພີວີ **IPV** ຊຶ່ງແມ່ນຢາສັກທີ່ເພິ່ນໃຫ້ສັກໂດຍສຫງວນໃຊ້ຢູ່ສຫາຣັຖໃນປະຈຸບັນນີ້ ແລະຢາວັກຊີກັນໂຣກເປ້ອຍ ຫລ່ອຍ ຊະນິດ ໂອພີວີ **(OPV)** ຊຶ່ງແມ່ນຊະນິດຢອດເຂົ້າທາງປາກແລະຊຶ່ງຕົວເຊື້ອຢາຍັງເປັນຢູ່.
ຈົນກະທັ້ງປະຈຸບັນນີ້, ຢາໂອພີວີ (OPV) ໄດ້ຖືກຫງວນ ສຳຮັບໃຊ້ກັບເດັກ ໃນສຫາຣັຖ. ຢາໂອພີວີ (OPV) ນີ້ໄດ້ກຳຈັດໂຣກເປັ້ຍ ຫລ່ອຍນີ້ ຈາກບ້ານເມືອງເຮົາໃຫ້ຫມົດໄປ ແລະເພິ່ນຍັງໃຊ້ຢານີ້ຢູ່ໃນຫຼາຍປະເທດໃນໂລກ.
ຢາວັກຊິນທັງສອງນີ້ມີຄຸນນະພາບໄປປຸກປັ້ນຣ່າງກາຍໃຫ້ມີພູມຕ້ານທານກັບໂຣກເປັ້ຍຫລ່ອຍໄດ້, ແຕ່ວ່າຢາໂອພີວີ (OPV) ນີ້ມັນ ດີກວ່າ ເພາະວ່າ ມັນຮັກສາບໍ່ໃຫ້ພຍາດນີ້ລາມຕິດຜູ້ອື່ນ.
ເຖິງຢ່າງໃດກໍຕາມ, ສຳຮັບຄົນຈຳນວນນຶ່ງ (ປະມານ ນຶ່ງໃນ 2.4 ລ້ານຄົນ ຢາໂອພີວີ (OPV) ອາດທຳໃຫ້ເປັນເປັ້ຍໄດ້. ແຕ່ມີນ້ອຍສຸດໃນປະຈຸບັນນີ້, ຜູ້ຊ່ຽວຊານແຈ້ງໃຫ້ຊາບວ່າຢາວັກຊິນກັນໂຣກເປັ້ຍຫລ່ອຍຊະນິດຢອດ ເຂົ້າທາງປາກແມ່ນນັບວ່າປອດພັຍທີ່ສຸດ, ເພິ່ນຈະໃຊ້ຢາຊະນິດໃນກໍຣະນີພິເສດເທົ່ານັ້ນ. **ຢາວັກຊິນກັນ**ໂຣກເປັ້ຍຫລ່ອຍຊະນິດສັກໂອພີວີ (IPV) ທີ່ພວກເຮົາໃຊ້ກັນໃນປະຈຸບັນນີ້ຈະບໍ່ພາໃຫ້ເປັນເປັ້ຍຫລ່ອຍ. ຖ້າຫາກທ່ານຫຼືລູກຂອງທ່ານຈະໃຊ້ຢາວັກຊິນກັນໂຣກເປັ້ຍຫລ່ອຍຊະນິດຢອດນີ້ ຈົ່ງຂໍອ່ານບົດຄວາມສບັບເພີ່ມຕື່ມວ່າດ້ວຍ ຂໍ້ມູນກ່ຽວກັບ ຢາວັກຊິນໂອພີວີ (OPV) {Supplemental Vaccine Information Statements}.

## 4 ຜູ້ທີ່ມີບັນຫາທາງດ້ານສຸຂພາບທີ່ບໍ່ສາມາດຈະຮັບຢາວັກຊີນກັນ ໂຣກເປ້ຍຫລ່ອບນີ້ ຫຼື ຄວນເລື່ອນເວລາລໍຖ້າໄປກ່ອນ.

**ຄົນຈຳພວກດັ່ງຕໍ່ລົງໄປນີ້ບໍ່ຄວນຈະຮັບຢາວັກຊີນກັນ ໂຣກເປ້ຍຫລ່ອຍຊະນິດສັກ(IPV):**

- ບຸກຄົນໃດທີ່ຮ່າງກາຍແພ້ຢາຕ້ານເຊື້ອ, **ປະເພດຢານີໂອມັຍຊິນ, ຢາສເຕັບໂຕມັຍຊິນ, ຫຼືຢາ ໂປລີໂອໄມຊິນ ບີ,** ບໍ່ຕ້ອງໃຫ້ເຂົາເຈົ້າ ສັກຢາປ້ອງກັນໂຣກເປ້ຍຫລ່ອຍ.

- ຜູ້ໃດທີ່ເກີດມີອາການແພ້ຢາວັກຊີນຊະນິດຢອດເຂົ້າທາງປາກ ທີ່ຜ່ານມາ. ບໍ່ຕ້ອງໃຫ້ເພິ່ນໃຊ້ອີກ.

**ຄົນຈຳພວກນີ້ຄວນຈະເລື່ອນເວລາລໍຖ້າໄປກ່ອນ:**

- ຜູ້ໃດທີ່ປ່ວຍໄຂ້ໜັກຫຼືປານກາງກົງກັນກັບມື້ນັດໝາຍໄປສັກຢາ ກັນໂຣກນີ້ ຄວນຈະລໍຖ້າໄປກ່ອນຈົນຫາຍເປັນປົກກະຕິດີ ແລ້ວຈຶ່ງຈະກັບມາຮັບຢາວັກຊີນນີ້. ຜູ້ໃດທີ່ບໍ່ສບາຍເລັກນ້ອຍ ເຊັ່ນເປັນຫວັດນັ້ນ *ອາດ*ຈະໄດ້ຮັບຢາວັກຊີນນີ້ໄດ້.

ຈົ່ງປຶກສານຳທ່ານໝໍຂອງທ່ານ ຖ້າຢາກຮູ້ຂໍ້ມູນເພີ້ມເຕີມ.

## 5 ພັຍອັນຕຣາຍທີ່ເນື່ອງມາຈາກການໃຊ້ຢາວັກຊີນນີ້ມີຫຍັງແດ່ ?

ບາງຄົນທີ່ສັກຢາວັກຊີນມາແລ້ວຈະຮູ້ສຶກເຈັບເລັກນ້ອຍຢູ່ທີ່ບ່ອນເຂັມ ສັກ. ຢາວັກຊີນທີ່ໃຊ້ສັກຢູ່ໃນທຸກວັນນີ້ກໍ່ບໍ່ເຄີຍສ້າງຄວາມເດືອດຮ້ອນ ໃຫ້ແກ່ຜູ້ໃດແລະຄົນສ່ວນຫຼາຍສັກໄປແລ້ວກໍ່ບໍ່ພົບບັນຫາໃດໆທັງສິ້ນ ຍ້ອນຢານີ້.

ເຖິງຢ່າງໃດກໍ່ຕາມ ຢາວັກຊີນ ກໍ່ເໝືອນກັບຢາອື່ນໆ, ອາດສາມາດສ້າງບັນຫາເດືອດຮ້ອນຕ່າງໆແກ່ສຸຂພາບໄດ້. ເຊັ່ນການແພ້ຢາຢ່າງໜັກ. *ການຖືກເຄາະຮ້າຍເສັຍສຸຂພາບຍ້ອນພິດຂອງຢາຫຼືເຖິງຂັ້ນຕາຍຍ້ອນເນື່ອງຈາກສັກຢາວັກຊີນນີ້ມີເປີເຊັນນ້ອຍທີ່ສຸດ.*

## 6 ປະຕິກິຣິຍາທີ່ຮ້າຍແຮງທີ່ຈະເກີດຂື້ນມີຫຍັງແດ່ ?

**ຂ້າພະເຈົ້າຈະຊອມເບິ່ງຫຍັງແດ່ທີ່ອາດຈະເກີດຂື້ນ?**

ຈົ່ງຊອມເບິ່ງອາການທີ່ຜິດປົກກະຕິເກີດຂື້ນ, ເຊັ່ນອາການແພ້ທີ່ ຮ້າຍແຮງ, ໄຂ້ຂື້ນສູງ, ການປະພຶດຕົນຜິດສັງເກດ.

ຖ້າຫາກມີອາການແພ້ຕ່າງໆເກີດຂື້ນ, ມັນຈະປາກົດຂື້ນພາຍໃນສອງ ສາມນາທີ ຫາສອງສາມຊົ່ວໂມງຫຼັງຈາກສັກຢາແລ້ວ. ອາການຕ່າງໆ ເຫຼົ່ານັ້ນມີຄື ຫາຍໃຈຝືດ, ຮູ້ສຶກອອ່ນເພັຍ, ຄໍແຫບ ຫຼື ຫາຍໃຈ ຫອບແຫດ, ຫົວໃຈເຕັ້ນໄວ, ເປັນວິນ, ຜື່ງຄໍໃຄ່, ອອກຕຸ່ມມື່ນ ມ່ານຫຼືຮ່າງກາຍເປັນສີມ້ານເຂົ້າ.

**ຂ້າພະເຈົ້າຄວນຈະເຮັດຫຍັງແດ່?**

- ໂທຣສັບຫາທ່ານຫໝໍ ຂອງທ່ານ ຫຼື ນຳເອົາຄົນນັ້ນໄປຫາທ່ານໝໍ ທັນທີ.

- ບອກເຣື່ອງທີ່ເກີດຂື້ນສູ່ທ່ານໝໍຟັງ. ວັນເວລາ ທີ່ເກີດເຫດ, ວັນເວລາທີ່ສັກຢາເຂົ້າ.

- ຈົ່ງຖາມທ່ານໝໍຂອງທ່ານ, ນາງພຍາບານ, ກະຊວງ ສາທາຣະນະສຸກ ໃຫ້ຮູ້ວິທີຂຽນຟອມຣາຍງານເຣື່ອງເຫດເກີດຂື້ນ ຍ້ອນຢາວັກຊີນ [Vaccine Adverse Event Reporting System (VAERS)] ຫຼື ໂທຣສັບຟຣີໄປຫາເພິ່ນດວ້ຍທ່ານເອງທີ່ **1-800-822-7967.**

ການຣາຍງານເຣື່ອງປະຕິກິຣິຍາທີ່ເກີດຂື້ນຈະຊ່ວຍໃຫ້ຜູ້ຊ່ຽວຊານໄດ້ຊອກຮູ້ບັນຫາຕ່າງໆກ່ຽວກັບຢານັ້ນ.

## 7 ໂຄງການແຫ່ງຊາດເພື່ອທົດແທນຄ່າເສັຍຫາຍໃຫ້ແກ່ຜູ້ທີ່ ໄດ້ ຮັບເຄາະ ເນື່ອງການຢາວັກຊີນກັນໂຣກ.

ໃນກໍຣະນີທີ່ທ່ານຫຼືລູກຂອງທ່ານໄດ້ຮັບພັຍອັນຕະຣາຍທີ່ເກີດຈາກການ ໃສ່ຢາວັກຊີນ ທາງຣັຖບານໄດ້ຈັດຕັ້ງໂຄງການຊ່ວຍເຫຼືອໄວ້ແລ້ວ ເພື່ອຈ່າຍຄ່າປິ່ນປົວໃຫ້ຜູ້ທີ່ໄດ້ຮັບເຄາະຮ້າຍ.

ສຳຣັບຣາຍລະອຽດເພີ່ມເຕີມກ່ຽວກັບໂຄງການແຫ່ງຊາດເພື່ອທົດແທນຄ່າເສັຍຫາຍໃຫ້ຜູ້ເຄາະເນື່ອງຈາກການໃສ່ຢາວັກຊີນ {National Vaccine Injury Compensation Program} ໂທຣຫາ **1-800-338-2382** ຫຼື ຈະຕິດຕໍ່ເຂົ້າໄປເບິ່ງທາງ ອິນເທີເນັດ **http://www.hrsa.gov/bhpr/vicp**

## 8 ເຮັດວິທີໃດຂ້າພະເຈົ້າຈະໄດ້ຮຽນຮູ້ເພີ້ມກ່ຽວກັບເຣື່ອງໂຣກນີ້)

- ສອບຖາມເຣື່ອງນຳທ່ານໝໍຫຼືນາງພຍາບານ. ເພິ່ນຈະເອົາເອກກະ ສານເຣື່ອງການໃຊ້ຢາວັກຊີນເພື່ອໃຫ້ທ່ານໄປອ່ານຫຼື ຈະແນະນຳ ທ່ານໄປຊອກຄົ້ນຫາເອົາຢູ່ທີ່ສູນເຜີຍແຜ່ຂ່າວຂໍ້ມູນອື່ນໆ.

- ໂທຣສັບໄປຖາມຜແນກສາທາຣະນະສຸກທ້ອງຖິ່ນຫຼືກະຊວງ ສາທາຣະນະສຸກຂອງຣັຖທ່ານ ກ່ຽວກັບການໃຊ້ຢາວັກຊີນ.

- ຕິດຕໍ່ສູນກາງຄວບຄຸມແລະປ້ອງກັນພຍາດ (CDC).
  - **Call 1-800-232-4636 (1-800-CDC-INFO)**
  - ຈະເບິ່ງໃນ ອິນເທີເນັດ **http://www.cdc.gov/nip**

CDC
CENTERS FOR DISEASE CONTROL AND PREVENTION

**U.S. DEPARTMENT OF HEALTH & HUMAN SERVICES**
Centers for Disease Control and Prevention
National Immunization Program


Vaccine Information Statement
Polio (1/1/2000) 42 U.S.C. § 300aa-26